# ບົດຮຽນໂຮງຮຽນວັນອາທິດ
# ວັນອາທິດທີ 29 ມັງກອນ 2017 (1-29-2017)

## ແບ່ງປັນດ້ວຍຄວາມຍິນດີ

*ມີຫຍັງທີ່ທ່ານມັກທີ່ສຸດຈົນບໍ່ຢາກແບ່ງປັນໃຫ້ໃຜ ?*

**ຈຸດສຳຄັນໃນບົດຮຽນ**: ບໍ່ວ່າຈະຢູ່ໃນສະພາບການຢ່າງໃດ ຂ້າພະເຈົ້າສາມາດແບ່ງປັນເລື່ອງພຣະຄຣິດ.

**ພຣະຄັມພີຕອບສນອງຕໍ່ຊີວິດ**:

ເພື່ອນຂອງຂ້າພະເຈົ້າຊື່ໂຢເອນ ໄດ້ນຳພາໂປຣແກຣມກໍ່ຕັ້ງໂບດໃນເມືອງຄິວ ປະເທດຢູເຄຣນ ເປັນເວລາຫລາຍກວ່າສິບປີ. ເພິ່ນຈະມີແຜນທີ່ອັນນຶ່ງແຂວນຢູ່ຫ້ອງການຂອງເພິ່ນ ຊຶ່ງເຕັມໄປດ້ວຍຮູບຂອງພວກຜູ້ກໍ່ຕັ້ງໂບດທົ່ວສາທະພາບໂຊວຽດ.

ໃນການໄປຢ້ຽມຢາມເມືອງ**ຄິວ,** ຂ້າພະເຈົ້າໄດ້ວາງສະແດງແຜນທີ່ນີ້ເທິງຝາຂອງທ່ານໂຢເອນ. ຂ້າພະເຈົ້າຊີ້ໃສ່ອີມານູເອນ ຊຶ່ງມາຈາກເມືອງລົດທົວເນັງ, ຊາຍຮ່າງໃຫຍ່ຜູ້ນຶ່ງທີ່ມີລາຍສັກເຕັມນິ້ວມືທຸກນິ້ວ. ອີມານູເອນ ຄັ້ງນຶ່ງຊື່ອາດພົລນາໄດ້ວ່າ, ຄາວຍັງຢູ່ໃນຄຸກ, ເພິ່ນມັກຈີກເຈັ້ຽພຣະຄັມພີພັນຊາສູບ. ແຕ່ບັດນີ້ ອີມານູເອນບໍ່ໄດ້ຢູ່ໃນຄຸກອີກແລ້ວ, ແລະເພິ່ນບໍ່ໄດ້ "ສູບພຣະຄັມພີ" ອີກແລ້ວ ແຕ່ດຽວນີ້ເພິ່ນເທສນາ “ພຣະຄັມພີ” !

ໃນໂລກນີ້ ຄົນຜູ້ນຶ່ງຫັນປ່ຽນຈາກການສູບພຣະຄັມພີ ແລະດຳຣົງຊີວິດຕໍ່ຕ້ານຂ່າວປະເສີດ ໄດ້ຫັນມາເທສນາພຣະຄັມພີ ແລະປ່າວປະກາດຂ່າວປະເສີດພຣະເຢຊູຄຣິດໄດ້ແນວໃດ? ຄຳຕອບກໍງ່າຍໆ ກໍຄື: ພຣະເຢຊູສາມາດປ່ຽນຊີວິດໄດ້. ອີມານູເອນໄດ້ພົບກັບຄວາມຍິນດີທີ່ຍິ່ງໃຫຍ່ກວ່າຫຼາຍ ໃນການຮູ້ຈັກພຣະເຢຊູ ແລະການແບ່ງປັນພຣະເຢຊູ.

ໃນທາງດຽວກັນ, ທ່ານໂປໂລ ຄັ້ງນຶ່ງເຄີຍເປັນຜູ້ກໍ່ການຮ້າຍຕໍ່ສູ້ຄຣິສຕະຈັກ, ໄດ້ກັບກາຍມາເປັນຜູ້ປະກາດເຕັມລົ້ນດ້ວຍຄວາມຍິນດີຖ້າມກາງຄຣິສຕະຈັກ.

**ພຣະຄັມພີກ່າວວ່າແນວໃດ?** ຟີລິບປອຍ 1:12-21 ( ເບິ່ງຕາມຫົວຂໍ້ 1, 2 ແລະ 3 )

### ການສຶກສາພຣະຄັມພີ

**1. <u>ຟີລິບປອຍ 1:12-14</u> :**

12 *ພີ່ນ້ອງທັງຫຼາຍເອີຍ ເຮົາປາຖນາໃຫ້ເຈົ້າທັງຫຼາຍຮູ້ວ່າ ເຫດການທີ່ເກີດຂຶ້ນແກ່ເຮົານັ້ນກໍກັບເປັນເຫດໃຫ້ຂ່າວປະເສີດ*
*ແຜ່ກວ້າງອອກໄປ,* 13 *ຈົນປາກົດທົ່ວໄປໃນໝູ່ຜູ້ຄຸມ ແລະ ຄົນອື່ນໆ ວ່າ ການຈອງຈຳທີ່ເຮົາຖືກນັ້ນກໍເພື່ອພຣະຄຣິດ.*
14 *ພວກພີ່ນ້ອງສ່ວນຫຼາຍໄດ້ເກີດມີຄວາມໄວ້ວາງໃຈໃນອົງພຣະຜູ້ເປັນເຈົ້າ ເພາະການຈຳຈອງຂອງເຮົານັ້ນ ແລະພວກ*
*ເຂົາມີໃຈກ້າຂຶ້ນຢ່າງລົ້ນເຫຼືອທີ່ຈະກ່າວພຣະທັມຂອງພຣະເຈົ້າໂດຍບໍ່ມີຄວາມຢ້ານ.*

ທ່ານໂປໂລ ໄດ້ຢູ່ໃນຄຸກເພາະການຮັບໃຊ້ຂອງເພິ່ນ. ແຕ່ຂນະທີ່ເພິ່ນຂຽນເຖິງຊາວຟີລິບປອຍ ເພິ່ນບໍ່ໄດ້ເຈາະຈົງໃສ່ການຂັງຄຸກຂອງເພິ່ນ. ເພິ່ນບໍ່ໄດ້ຈົ່ມເຖິງໂຊກຊາຕາຂອງເພິ່ນ. ແທນທີ່ຈະຈົ່ມຢ່າງນັ້ນເພິ່ນໄດ້ຖືເອົາທັສນະພຣະເຈົ້າຕໍ່ສະຖານະການລວມທັງໝົດ, ເຕືອນຄວາມຈຳຂອງຄຣິສຕະຈັກວ່າ ເຖິງແມ່ນວ່າເພິ່ນກຳລັງຢູ່ໃນຄຸກ ພັນທະກິດຂອງພຣະເຈົ້າກໍໄດ້ສຳເຣັດ. ຄົນທັງຫຼາຍໄດ້ຮັບການກະຕຸ້ນຢ່າງແຮງກ້າດ້ວຍການຈຳຈອງຂອງເພິ່ນ, ຄຣິສຕຽນມີໃຈກ້າຂຶ້ນ. ພວກເຮົາສາມາດຮຽນຮູ້ຈາກທ່ານໂປໂລ, ເພາະວ່າມຸມມອງຢ່າງພຣະເຈົ້ານັ້ນບໍ່ເປັນການງ່າຍຈະເປັນທີ່ຍອມຮັບ. ສະພາບການເລວຮ້າຍຕ່າງໆສາມາດເປັນທີ່ແຫ່ງຄວາມຍິນດີໃຫ້ຫລັ່ງໄຫຼຈາກເຮົາໄປສູ່ຄົນອື່ນ. ແລະການຮັບໃຊ້ກໍສາມາດ

ໃຊ້ເຊີດຊູຄວາມຍິນດີເຮົາຂຶ້ນຢ່າງສງ່າຜ່າເຜີຍເໝືອນກັນ. ກຸນແຈທີ່ຈະຮັກສາຄວາມຍິນໃຫ້ເຫຼືອຢູ່ໃນຊີວິດແລະການຮັບໃຊ້ນັ້ນແມ່ນການເກາະຕິດຢູ່ກັບແຫຼ່ງທີ່ມາຂອງຄວາມຍິນດີ. ຈົ່ງປັກຕາເບິ່ງພຣະເຢຊູ.

ຂ່າວດີທີ່ສຸດສຳລັບທ່ານໂປໂລ ແມ່ນການຖືກສອບສວນຂອງເພິ່ນເປັນເຫດໃຫ້ຂ່າວປະເສີດແຜ່ກວ້າງອອກໄປ, ໂດຍສະເພາະແມ່ນໃນສູນກາງດ້ານການເມືອງຂອງໂລກຄື: ກຸງໂຣມ. ບໍ່ພຽງແຕ່ໝູ່ຜູ້ຄຸມແລະຂ້າຣາຊການຊັ້ນຜູ້ໃຫຍ່ເທົ່ານັ້ນທີ່ໄດ້ຍິນຂ່າວປະເສີດ, ທ່ານໂປໂລ ໄດ້ໄປໃນເມືອງຫຼວງບ່ອນທີ່ການເປັນພະຍານຂອງເພິ່ນພາໃຫ້ເກີດຜົນແກ່ຄົນອື່ນໆຈຳນວນຫຼວງຫາຍ. ເພາະວ່າເພິ່ນເປັນຫ່ວງນຳຂ່າວປະເສີດຫຼາຍກວ່າຄວາມສະດວກສະບາຍ ແລະຄວາມປາຖະໜາສ່ວນຕົວຂອງເພິ່ນເອງ ເພິ່ນມີຄວາມປິຕິຍິນດີ.

ມາພາກັນອະທິຖານເພື່ອຄວາມກ້າຫານຢ່າງໃຫຍ່ຂະນະທີ່ເຮົາເຮັດໃຫ້ຂ່າວປະເສີດເປັນທີ່ຮູ້ຈັກແກ່ຄົນອື່ນໆດ້ວຍໃຈຍິນດີ. ຖ້າທ່ານພົບວ່າ ທ່ານກຳລັງຕົກຢູ່ໃນການທົດລອງຢ່າງຮ້າຍແຮງ, ແນ່ນອນທ່ານຄວນອະທິຖານ ແລະຊອກຫາການອູ້ມຊູຈາກຄົນອື່ນ. ແຕ່ຈົ່ງມີໃຈກ້າຫານທີ່ຈະເຫັນຄວາມຫຍຸ້ງຍາກເປັນໂອກາດເໝືອນກັນ ໃນຄວາມຍາກລຳບາກພວກເຮົາຕ້ອງປ່າວປະກາດຂ່າວປະເສີດຂອງພຣະຜູ້ໂຜດ ແລະເປັນພະຍານເຖິງຂ່າວປະເສີດຂອງພຣະຄຣິດ!

| |
|---|
| ***ດົນປານໃດແລ້ວທີ່ທ່ານໄດ້ຮັບແຮງກະຕຸ້ນໃຈໃຫ້ກ້າຫານດ້ວຍຄວາມເຊື່ອ ແລະຄວາມພະຍາຍາມຂອງຄົນອື່ນ?*** |

**2. <u>ຟີລິບປອຍ 1:15-19</u>** :

*15 ຄວາມຈິງມີບາງຄົນປະກາດເລື່ອງພຣະຄຣິດດ້ວຍໃຈອິດສາ ແລະຜິດຖຽງກັນ ແຕ່ກໍມີຄົນອື່ນທີ່ປະກາດດ້ວຍໃຈຫວັງດີ. 16 ພວກນີ້ແຫຼະ ປະກາດດ້ວຍໃຈຮັກ ໂດຍຮູ້ແລ້ວວ່າ ຊົງຕັ້ງເຮົາໄວ້ໃຫ້ປ້ອງກັນຂ່າວປະເສີດນັ້ນໄວ້. 17 ແຕ່ພວກອື່ນປະກາດຂ່າວພຣະຄຣິດດ້ວຍໃຈແຂ່ງດີກັນບໍ່ໃຊ່ດ້ວຍໃຈສຸຈຣິດແຕ່ຈົ່ງໃຈເພີ້ມຄວາມທຸກລຳບາກໃຫ້ເຮົາເມື່ອເຮົາຖືກຈຳຈອງ. 18 ຖ້າຢ່າງນັ້ນແລ້ວຈະເປັນປະການໃດ ເຖິງແມ່ນວ່າເຂົາຈະປະກາດພຣະຄຣິດດ້ວຍປະການໃດກໍຕາມ ຈະເປັນການແກ້ງ ຫຼືໃຈຈິງກໍດີ ແຕ່ເຂົາກໍຍັງປະກາດເລື່ອງພຣະຄຣິດ ໃນການນີ້ເຮົາກໍມີຄວາມຍິນດີແລະຄົງຈະມີຄວາມຍິນດີຕໍ່ໄປ. 19 ເພາະເຮົາຮູ້ວ່າ ໂດຍການອ້ອນວອນຂອງເຈົ້າທັງຫຼາຍ ແລະໂດຍການຊ່ອຍເຫຼືອຈາກພຣະວິນຍານຂອງພຣະເຢຊູຄຣິດ ການນີ້ຈະເປັນເຫດໃຫ້ເຮົາເຖິງການປົດປ່ອຍ.*

ທ່ານໂປໂລ ໄດ້ອ້າງເຖິງຄວາມພະຍາຍາມສອງຢ່າງທີ່ແຕກຕ່າງກັນ ໃນການຂັບເຄື່ອນການປະກາດຂ່າວປະເສີດສອງປະເພດທີ່ແຕກຕ່າງກັນຄື:

- **ການປະກາດດ້ວຍໃຈອິດສາ** ປະກາດດ້ວຍ "ການແຂ່ງດີແຂ່ງເດັ່ນ" ແລະ "ໃຈອິດສາ," ຖືກຊັກນຳດ້ວຍຄວາມມັກໃຫຍ່ໄຝ່ສູງຂອງເຂົາ. ເຂົາເພັ່ງເບິ່ງການຕິດຄຸກຂອງທ່ານໂປໂລ ເປັນໂອກາດທີ່ຈະຢຽບຢ່ຳເພິ່ນລົງ, ເພື່ອກໍ່ກວນບັນຫາໃຫ້ໃຫຍ່ຂຶ້ນ, ແລະຍົກເອົາການປະກາດຂອງເຂົາຂຶ້ນທັບຖົມການປະກາດຂອງທ່ານໂປໂລ.
- **ການປະກາດດ້ວຍໃຈຮັກ** ປະກາດໄປດ້ວຍ "ໃຈຍິນດີ", ບັນດົນໃຈດ້ວຍຄວາມຮັກ ເຂົາເປັນຫ່ວງເປັນໃຍນຳທ່ານໂປໂລ ແລະເຂົ້າໃຈວ່າການຈຳຈອງຂອງທ່ານໂປໂລເປັນນ້ຳພຣະທັຍອັນສູງສົ່ງຂອງພຣະເຈົ້າ, ແລະບໍ່ແມ່ນເນື່ອງຈາກການບໍ່ເຊື່ອຟັງ ຫຼືການຂາດຄວາມເຊື່ອຂອງທ່ານໂປໂລ.

ໃນຂໍ້ 18, ພວກເຮົາເຫັນວ່າການປະກາດເກີດຜົນດີກວ່າບັນດາຜູ້ປະກາດ ຫຼືຄວາມພະຍາຍາມຂອງເຂົາ. ທ່ານໂປໂລ ບໍ່ເຄີຍອ່ອນຂໍ້ຕໍ່ພວກເຜີຍແຜ່ຄຳສອນປອມ, ຄວາມຈິງແລ້ວ, ເພິ່ນກໍເຄີຍຂຽນຈົດໝາຍເຖິງຊາວຄາລາເຕັຽມາແລ້ວເພື່ອຕໍ່ຕ້ານການພະຍາຍາມເຜີຍແຜ່ຄຳສອນປອມ. ແຕ່ຖ້າຂ່າວປະເສີດແທ້ຖືກປະກາດອອກໄປ, ທ່ານໂປໂລຄົງຈະດີໃຈແນ່ນອນ, ທ່ານໂປໂລ ຕ້ອງຊື່ນຊອບຂ່າວປະເສີດທີ່ຖືກຕ້ອງສຳລັບການເຄື່ອນໄຫວທີ່ຖືກຕ້ອງຫຼາຍກວ່າ, ແຕ່ໄດ້ສຸມໃສ່ຄວາມສຳຄັນສູງສຸດໃນຕົວຂ່າວປະເສີດເອງ.

ຍຸດທະວິທີນີ້ຍັງໃຊ້ໄດ້ຜົນທຸກວັນນີ້ໃນການປະກາດຂ່າວປະເສີດໃຫ້ຄົນຟັງ ໃນຂະນະທີ່ເຮົາມີຊີວິດທີ່ດຶງດູດໃຈ ແລະຊື່ນໃຈຍິນດີຕໍ່ໜ້າເຂົາ. ໃຫ້ເຮົາສົນໃຈນຳສະງ່າຣາສີຂອງພຣະຄຣິດຫຼາຍກວ່າໃຫ້ກຽດແກ່ເຮົາເອງ, ແລະໃຫ້ເຮົາຊື່ນຊົມຍິນດີຈົນກວ່າເຮົາຈະໄດ້ເຫັນພຣະອົງໜ້າຕໍ່ໜ້າ.

ຜູ້ທີ່ຕິດຕາມພຣະຄຣິດຕ້ອງຕຽມໃຈໃຫ້ພ້ອມຕໍ່ການຕິຕຽນ. ພວກເຮົາຕ້ອງຕຽມຈິດຕຽມໃຈໃຫ້ພ້ອມທີ່ຈະຕິດຕາມແບບຢ່າງຂອງທ່ານໂປໂລ. ເພິ່ນບໍ່ໄດ້ພະຍາຍາມປ້ອງກັນຕົວເພິ່ນເອງ. ເພິ່ນພຽງແຕ່ສຸມໃສ່ການດໍາຣົງຊີວິດຂອງເພິ່ນເພື່ອພຣະຄຣິດ ແລະປະກາດຄວາມຈິງ ເພິ່ນເອົາຂ່າວປະເສີດມາກ່ອນ. ທ່ານບໍ່ສາມາດຫ້າມສິ່ງທີ່ຜູ້ອື່ນຄິດຕໍ່ທ່ານໄດ້; ສິ່ງທີ່ທ່ານສາມາດກະທໍາໄດ້ແມ່ນເຮັດໃຫ້ການແລ່ນແຂ່ງຂອງທ່ານສໍາເຣັດດ້ວຍຄວາມເຊື່ອ.

ໃນ ຂໍ້ 19, ທ່ານໂປໂລ ເຜີຍໃຫ້ເຫັນສອງສິ່ງທີ່ເພິ່ນອີງໃສ່ໃນການການຮັບໃຊ້ຂອງເພິ່ນ ແມ່ນແຕ່ຍາມເພິ່ນຢູ່ໃນຄຸກ. ສອງຢ່າງນີ້ແມ່ນການອະທິຖານຂອງຄຣິສຕະຈັກ ແລະການຊ່ອຍເຫຼືອຂອງພຣະວິນຍານບໍຣິສຸດ. ພວກເຮົາກໍເພິ່ງພາສອງສິ່ງນີ້ໄດ້ແຕ່ລະວັນ!

ເຊັ່ນດຽວກັບທ່ານໂປໂລ, ພວກເຮົາສາມາດແບ່ງປັນຂ່າວປະເສີດດ້ວຍໃຈຍິນດີບໍ່ວ່າຈະຕົກຢູ່ໃນສະພາບໃດກໍຕາມ. ເພື່ອຈະເຮັດສິ່ງນີ້ໄດ້ນັ້ນ, ພວກເຮົາຕ້ອງຮັກສາໄວ້ຢ່າງກະທັດລັດ, ແລະປັກຕາໃສ່ພຣະເຢຊູ. ພວກເຮົາຕ້ອງເອົາຂ່າວປະເສີດມາກ່ອນ. ພວກເຮົາຈໍາເປັນຕ້ອງຫ່ວງໃຍຄົນອື່ນ ແລະສະງ່າຣາສີຂອງພຣະຄຣິດເໜືອກວ່າຄວາມຮຸ່ງເຮືອງຂອງເຮົາເອງ. ແລະພວກເຮົາຕ້ອງຕັ້ງໝັ້ນຄົງຢູ່ເມື່ອມີຄົນກຽດຊັງເຮົາ.

| |
|---|
| ***ຂໍ້ພຣະທັມເຫຼົ່ານີ້ສອນເຮົາກ່ຽວກັບການປະກາດຢ່າງໃດ?*** |

**3. <u>ຟີລິບປອຍ 1:20-21</u>** :

*[20] ເພາະເປັນຄວາມມຸ້ງມາດປາຖນາ ແລະຄວາມຫວັງຂອງເຮົາວ່າ ເຮົາຈະບໍ່ມີຄວາມລະອາຍໃນສິ່ງໃດເລີຍ ແຕ່ກ່ອນທຸກເທື່ອທີ່ມີໃຈກ້າສເມີສັນໃດ ບັດນີ້ກໍຂໍໃຫ້ເປັນຢ່າງດຽວກັນສັນນັ້ນພຣະຄຣິດຈະຊົງຮັບພຣະກຽດຕິຍົດໃນຮ່າງກາຍຂອງເຮົາສເມີ ເຖິງແມ່ນເຮົາຈະມີຊີວິດຢູ່ ຫຼືຕາຍກໍຕາມ. [21] ເພາະວ່າ ຖ້າເຮົາມີຊີວິດ ພຣະຄຣິດເປັນຊີວິດນັ້ນຖ້າເຮົາຕາຍກໍເປັນປໂຍດແກ່ເຮົາ.*

ບໍ່ວ່າສິ່ງໃດທີ່ທ່ານຕັ້ງໃຈຈະເຮັດໃນຊີວິດ, ໃນການງານ, ຫຼືໃນຄອບຄົວຂອງທ່ານ, ຈົ່ງຍຶດຖືເອົາສິ່ງນີ້ໄວ້ເປັນແຜນການຂອງທ່ານໃນອະນາຄົດ. "ພຣະຄຣິດຈະຊົງຮັບກຽດສູງທີ່ສຸດ ໃນຮ່າງກາຍຂອງຂ້າພະເຈົ້າ, ບໍ່ວ່າຈະມີຊີວິດຢູ່ຫຼືຕາຍກໍຕາມ" ຈົ່ງໂອ້ລົມກັນກ່ຽວກັບນິມິດໝາຍການປະກາດ !

ແຕ່ທ່ານໂປໂລບໍ່ໄດ້ຢຸດຢູ່ທີ່ນັ້ນ, ເພິ່ນໄດ້ກ່າວເພີ້ມເຕີມໃນ ຂໍ້ 21 ວ່າ, " ເພາະວ່າ ຖ້າເຮົາມີຊີວິດພຣະຄຣິດເປັນຊີວິດນັ້ນ ຖ້າເຮົາຕາຍກໍມີປໂຍດແກ່ເຮົາ." ສາມສິ່ງໄດ້ຢືນຢັນເດັ່ນຊັດ ກ່ຽວກັບຖ້ອຍຄໍາທີ່ໄດ້ກ່າວນີ້:

- **ສະພາບທີ່ເປີດເຜີຍຂອງຄໍາຖແລງ.** ທ່ານ ໂປໂລ ເປັນຄົນທີ່ເປີດເຜີຍຕໍ່ຄວາມປາຖນາຂອງເພິ່ນທີ່ຢາກຈະມີຊີວິດຢູ່ເພື່ອພຣະຄຣິດ. ເພິ່ນຍິນດີໃຫ້ຄົນອື່ນເຫັນສິ່ງນັ້ນ. ພວກເຮົາສະແດງສິ່ງທີ່ສໍາຄັນຕໍ່ເຮົາທີ່ສຸດດ້ວຍການທີ່ເຮົາດໍາຣົງຊີວິດໃນສິ່ງນັ້ນຢ່າງໃດ. ທ່ານໂປໂລຊາບວ່າຖ້າເພິ່ນຍັງມີຊີວິດ, ກໍແປວ່າແນໃສ່ " ການງານເກີດຜົນ " (ຂໍ້ 22). **ພວກທ່ານບໍ່ສາມາດເວົ້າວ່າທ່ານຢູ່ເພື່ອພຣະຄຣິດ ຖ້າທ່ານບໍ່ທໍາງານເພື່ອພຣະອົງ.** ດັ່ງນັ້ນ ຖ້າທ່ານຈະເປັນຕົວແທນຂອງພຣະອົງ, ຈົ່ງໄປເພື່ອສ່ວນລວມ.
- **ພຣະຄຸນໃນຄໍາແລງການນີ້.** ເປົ້າໝາຍຂອງທ່ານໂປໂລ ແມ່ນຮູ້ຈັກພຣະຄຣິດຢ່າງເຕັມສ່ວນ ແລະຢູ່ເພື່ອພຣະອົງ. ແຕ່ ຕາມທີ່ເພິ່ນໄດ້ກ່າວໃນ ຟີລິບປອຍ 3:12-15 ວ່າ, ຍັງບໍ່ທັນສໍາເຣັດເປົ້າໝາຍນີ້ເທື່ອ. ທ່ານໂປໂລຍັງບໍ່ທັນບັນລຸຄວາມສົມບູນເທື່ອ, ແຕ່ພຣະຄຸນຂອງພຣະເຈົ້າຍັງສະຖິດນໍາເພິ່ນຢູ່. ການມີຊີວິດຢູ່ເພື່ອພຣະຄຣິດຂອງເພິ່ນຍັງໄດ້ຮັບຜົນໃນ "ການງານທີ່ເກີດຜົນ." ດັ່ງທີ່ເກີດກັບທ່ານໂປໂລ, ຊີວິດຂອງເຮົາຈະຫຼັ່ງໄຫຼຈາກການເຂົ້າຮ່ວມກັບພຣະຄຣິດ. ພວກເຮົາຕ້ອງການພຣະຄຸນຂອງພຣະອົງເພື່ອເປັນຜູ້ຕາງໜ້າພຣະອົງ. ແຕ່ລະວັນ, ພວກເຮົາຕ້ອງຊຶມຊື່ນໃນພຣະຄຸນຂອງພຣະອົງ ແລ້ວຕັດສິນໃຈດໍາຣົງຊີວິດຢ່າງສັດຊື່ຕໍ່ໜ້າຕໍ່ຕາໂລກທີ່ກໍາລັງຈ້ອງມອງເຮົາຢູ່.
- **ທ່າທີຍຶດໝັ້ນໃນຄໍາຖແລງການ.** ເມື່ອເຮົາດໍາຣົງຊີວິດໃນພຣະຄຸນຂອງພຣະເຢຊູ, ຊົງປະທານຣິດອໍານາດໃຫ້ໂດຍພຣະວິນຍານຂອງພຣະອົງ, ພວກເຮົາສາມາດແບ່ງປັນແນວຄິດຈິດໃຈທີ່ບໍ່ສາມາດທັກທ້ານແລະຍິນດີ ທີ່ປ່ຽມລົ້ນ

ຂອງທ່ານໂປໂລ. ພວກເຮົາສາມາດດໍາຣົງຊີວິດຢ່າງກ້າຫານເພື່ອພຣະຄຣິດ ໂດຍຮູ້ວ່າຖ້າເຮົາຕາຍ, ເຮົາກໍເມືອຢູ່ນໍາພຣະອົງ. ພວກເຮົາບໍ່ສູນເສັຽຫຍັງ!

*ເປັນຫຍັງບາງຄັ້ງເຮົາຈຶ່ງຮູ້ສຶກລະອາຍໃນການແບ່ງປັນຂ່າວປະເສີດ?*

ທ່ານເຫັນຣິດອໍານາດຂອງມຸມມອງນີ້ຫຼືບໍ່? ຖ້າຂ້ອຍຕາຍ? ຂ້ອຍກໍຈະໄປຢູ່ນໍາພຣະຄຣິດ. ຖ້າຂ້ອຍມີຊີວິດຢູ່? ຂ້ອຍກໍຢູ່ເພື່ອພຣະຄຣິດ. ຖ້າຂ້ອຍຖືກທໍຣະມານ? ຂ້ອຍກໍຈະພົບກັບຄວາມຊົມຊື່ນຍິນດີ ແລະໄດ້ຮັບບໍາເນັດຈາກພຣະຄຣິດ. ນີ້ແມ່ນແນວຄິດຈິດໃຈທີ່ບໍ່ສາມາດຫັກຫ້າມໄດ້ຂອງອັຄສາວົກ ໂປໂລ. ແນວຄິດນີ້ ກໍສາມາດເປັນແນວຄິດຂອງເຮົາໄດ້ເໝືອນກັນ ເມື່ອເຮົາຍົກຄຸນຄ່າພຣະຄຣິດຢູ່ເໜືອທຸກສິ່ງ.

ທ່ານຈະຕື່ມໃສ່ຊ່ອງຫວ່າງນີ້ຢ່າງໃດ? : "ສໍາລັບຂ້າພະເຈົ້າການມີຊີວິດຢູ່ແມ່ນ__________________". ຖ້າທ່ານເວົ້າວ່າ "ພຣະຄຣິດ," ແລ້ວການຕາຍກໍເປັນປໂຍດ. ຖ້າທ່ານເອົາເງິນ, ເພດສັມພັນ, ອໍານາດ, ຫຼື ສິ່ງອື່ນໆຕື່ມໃສ່ຊ່ອງວ່າງນີ້, ກໍເຫັນເຖິງເວລາທີ່ຕ້ອງກັບໃຈໃໝ່ ແລະຕ້ອງປ່ຽນແປງຊີວິດໃໝ່ຢ່າງຈິງຈັງ. ບໍ່ມີສິ່ງອື່ນໃດເຮັດໃຫ້ອີ່ມໃຈ, ແລະບໍ່ມີສິ່ງອື່ນໃດຈະຕັ້ງໝັ້ນຄົງຢູ່ຕລອດໄປເປັນນິດ.

ໃນພຣະຄຣິດພວກເຮົາສາມາດມີຄວາມຍິນດີໃນຊີວິດທີ່ມີຄຸນຄ່າ ແລະມີໃຈກ້າໃນຄວາມຕາຍທີ່ມີຄຸນຄ່າ. ແຕ່ມີຢູ່ໃນພຣະຄຣິດພຣະອົງດຽວເທົ່ານັ້ນ.

*ພວກເຮົາຈະສາມາດຊ່ວຍເຫຼືອຊຶ່ງກັນແລະກັນໃຫ້ກ້າຫານໃນການປະກາດຂ່າວປະເສີດຢ່າງໃດ?*

## ນໍາໃຊ້ໃນຊີວິດ

ພວກເຮົາປະສົບກັບຄວາມຍິນດີອັນໃຫຍ່ຫຼວງເມື່ອເຮົາແບ່ງປັນພຣະຄຣິດ. ຈົ່ງພິຈາຣະນາຄໍາແນະນໍາເຫຼົ່ານີ້ເພື່ອເອົາຄວາມຈິງນັ້ນໄປປະຕິບັດໃນອາທິດນີ້:

- **ຍົກຄຸນຄ່າພຣະຄຣິດເໜືອສິ່ງອື່ນ.** ຈົ່ງໃຊ້ເວລາ 2-3 ນາທີສາຣະພາບກັບໃຈທີ່ໄດ້ເອົາສິ່ງອື່ນເໜືອກວ່າພຣະຜູ້ໂຜດຂອງທ່ານ. ທູນຂໍພຣະບິດາ ເອົາທ່ານອອກຈາກຄວາມສນຸກສນານໃນຄວາມບາບ ແລະອອກຈາກໂລກ.

- **ອະທິຖານເພື່ອຄົນທີ່ທ່ານບໍ່ຄ່ອຍອະທິຖານເພື່ອ.** ຄິດນໍາຄົນ ມັກຕິ, ຕໍ່ສູ້, ຫຼືສັດຕຣູ. ຄິດນໍາຄົນທີ່ທ່ານ ອິດສາ. ຄິດນໍາຄົນໃນຄຣິສຕະຈັກອື່ນ. ອະທິຖານເພື່ອເຂົາເຈົ້າແຕ່ລະຄົນໃຫ້ຮູ້ຈັກພຣະຄຣິດ ແລະເຮັດໃຫ້ພຣະອົງເປັນທີ່ຮູ້ຈັກ.

- **ຈົ່ງອອກໄປຫາຄົນທີ່ຕ້ອງການຂ່າວປະເສີດ.** ຕັ້ງໃຈລິເລີ່ມການສົນທະນາກັບຜູ້ໃດຜູ້ນຶ່ງທີ່ຕ້ອງການພຣະຄຣິດ. ທູນຂໍພຣະບິດາໃຫ້ເພີ້ມເຕີມຄວາມຍິນດີ ແລະຄວາມໝັ້ນໃຈແກ່ທ່ານ ໃນຂນະທີ່ທ່ານແບ່ງປັນຄວາມຈິງໃນອາທິດນີ້ແລະຕໍ່ໆໄປ.

ມີຄົນຈໍານວນຫຼວງຫຼາຍໃນໂລກທຸກວັນນີ້ ສູບພຣະຄັມພີ ແທນທີ່ຈະອ່ານພຣະຄັມພີ. ນັ້ນບໍ່ໄດ້ເຮັດໃຫ້ເຮົາຕື່ນຕົກໃຈ ຫຼືຍາດເອົາຄວາມຍິນດີໄປຈາກເຮົາໄດ້. ແທນທີ່ຈະເປັນແນວນັ້ນ ຄວນເປັນແຮງຊຸກຍູ້ເຮົາເຂົ້າສູ່ການກະທໍາທີ່ດີກວ່າ.